# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ............ ໜ້າ 01-06

II. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ.................................................. ໜ້າ 07-13


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ເມສາ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງ ບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

**1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ວັນທີ 30/03/2023, ທ່ານ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ລົມໂທລະສັບກັບ ທ່ານ ໂຈ ໄບເດັນ, ປະທານາທິບໍດີອາເມລິກາ. ສອງຝ່າຍໄດ້ສະແດງຄວາມຊົມເຊີຍຕໍ່ການພົວພັນຮ່ວມມື, ໄດ້ຕີລາຄາສູງການພັດທະນາຢ່າງຕັ້ງໜ້າ ແລະ ຮອບດ້ານຂອງສອງປະເທດໃນໄລຍະຜ່ານມາ; ສອງຝ່າຍເຫັນດີຊຸກຍູ້ການພົວພັນຢ່າງເລິກເຊິ່ງເພື່ອຜົນປະໂຫຍດຂອງສອງປະເທດ. ທ່ານ ຫງວຽນ ຟູຈອງ ໄດ້ກ່າວວ່າ ບັນດາຜົນສຳເລັດຂອງການພົວພັນຫວຽດນາມ-ອາເມລິກາ ແມ່ນສອດຄ່ອງກັບຄວາມມຸ່ງມາດປາດຖະໜາຂອງປະຊາຊົນສອງຊາດ ບົນພື້ນຖານການເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ທ່ານ ໄບເດັນ ກ່າວວ່າ ຫວຽດນາມ ເປັນຄູ່ຮ່ວມມືທີ່ສຳຄັນຂອງອາເມລິກາ ແລະ ຈະສະໜັບສະໜູນຫວຽດນາມໃນການສ້າງຄວາມເຂັ້ມແຂງຂອງຕົນ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະ ລະບົບການເມືອງຂອງຫວຽດນາມ.

ວັນທີ 04/04/2023, ທ່ານ ຟາມ ມິງຈິງ, ນາຍົກລັດຖະມົນຕີ ສສ ຫວຽດນາມ ໄດ້ລົມໂທລະສັບກັບ ທ່ານ ຫຼີສຽງ, ນາຍົກລັດຖະມົນຕີ ສປ ຈີນ. ສອງຝ່າຍໄດ້ຢໍ້າຄືນເຖິງຄວາມສຳຄັນຂອງການພົວພັນຂອງສອງປະເທດບົນພື້ນຖານການຮັກສາສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ການພັດທະນາຢູ່ພາກພື້ນ ແລະ ສາກົນ, ຊຸກຍູ້ບັນດາທິດຊີ້ນຳຂອງສອງເລຂາທິການໃຫຍ່ ໃນປີຜ່ານມາ, ເພີ່ມທະວີການແລກປ່ຽນຄະນະຜູ້ແທນຂັ້ນສູງ, ການຮ່ວມມືໃນທຸກຂົງເຂດໃຫ້ມີປະສິດທິພາບ ແລະ ຍືນຍົງ, ເປີດກວ້າງການພົວພັນມິດຕະພາບຂອງສອງປະເທດ, ຮັກສາກົນໄກການຮ່ວມມືຂອງສອງກະຊວງປ້ອງກັນປະເທດ, ສືບຕໍ່ແກ້ໄຂບັນຫາຊາຍແດນທາງບົກຢ່າງມີປະສິດທິຜົນ, ລົງເລິກບັນດາມາດຕະການເພື່ອຮັກສາລະດັບການຄ້າຂອງສອງຝ່າຍ, ຍົກສູງປະສິດທິຜົນໃນການເກັບພາສີ-ອາກອນ ແລະ ເພີ່ມທະວີການເຊື່ອມຕໍ່ທາງທະເລ, ອາກາດ ແລະ ທາງລົດໄຟຂອງສອງປະເທດ.

ວັນທີ 18-23/4/2023, ທ່ານ Vuond Dinh Hue, ປະທານສະພາແຫ່ງຊາດຫວຽດນາມ ໄດ້ຢ້ຽມຢາມກູບາຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມສາມັນພິເສດ ຂອງສະພາແຫ່ງຊາດກູບາ ຄັ້ງທີ 10 ຊຶ່ງໄດ້ສະແດງຄວາມຊົມເຊີຍຕໍ່ສາຍພົວພັນມິດຕະພາບຂອງຫວຽດນາມ ແລະ ກູບາ; ລາຄາສູງຕໍ່ກອງປະຊຸມດັ່ງກ່າວ ໄດ້ເລືອກເອົາ ຜູ້ນຳຂັ້ນສູງຫຼາຍຕຳແໜ່ງ ເພື່ອບໍລິຫານປະເທດ ແຕ່ປີ 2023-2028, ໃນນັ້ນແມ່ນເລືອກເອົາທ່ານ Miguel Diaz-Canel Bermudez, ເລຂາທິການທີໜຶ່ງ ຂອງພັກກອມມູນິດກູບາ ເປັນປະທານປະເທດກູບາ ອີກວາລະໜຶ່ງ; ພ້ອມທັງເຊື່ອໝັ້ນວ່າ ກູບາ ຈະສາມາດຜ່ານຜ່າຄວາມຫຍຸ້ງຍາກ ແລະ ຄວາມທ້າທາຍ ຕໍ່ການພັດທະນາເສດຖະກິດ, ສັງຄົມຂອງກູບາ. ການຢ້ຽມຢາມຄັ້ງນີ້ ປະກອບສ່ວນສຳຄັນ ເຂົ້າໃນການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດຂອງສອງປະເທດ ຄົບຮອບ 60 ປີ ແລະ ສອງຝ່າຍ ໄດ້ລົງນາມ ສັນຍາການຮ່ວມມືໃນຂົງເຂດເສດຖະກິດ, ວັດທະນະທຳ, ການສຶກສາ, ສາທາລະນະສຸກ ແລະ ອື່ນໆ ເພື່ອສົ່ງເສີມການຮ່ວມມືໃນຕໍ່ໜ້າ. ທ່ານ Vuond Dinh Hue ເປັນຜູ້ນຳຕ່າງປະເທດຄົນທຳອິດ ທີ່ຢ້ຽມຢາມກູບາ ພາຍຫຼັງການເລືອກຕັ້ງທົ່ວໄປ ແລະ ການເລືອກຕັ້ງຕຳແໜ່ງຂັ້ນສູງທີ່ສຳຄັນຂອງກູບາ.

**2). ພັກກອມມູນິດຈີນ**

ວັນທີ 27/3/2023, ທ່ານ ສິນ ກາງ, ທີ່ປຶກສາແຫ່ງລັດ, ລັດຖະມົນຕີກະຊວງການຕ່າງປະເທດ ສປ ຈີນ ໄດ້ພົບປະກັບ ທ່ານ ກາວ ກິມຮຸນ, ເລຂາທິການໃຫຍ່ອາຊຽນ. ທ່ານ ສິນ ກາງ ໄດ້ກ່າວວ່າ ປີນີ້ເປັນປີຄົບຮອບ 10 ປີ ຂອງການສ້າງປະຊາຄົມຮ່ວມຊະຕາກຳຈີນ-ອາຊຽນ, ສປ ຈີນ ເຫັນດີຮ່ວມກັບອາຊຽນໃນການເສີມຂະຫຍາຍກົດບັດຂອງ ສປຊ, ສົນທິສັນຍາໄມຕີຈິດ ແລະ ການຮ່ວມມືໃນພາກພື້ນອາຊຽນ; ຊຸກຍູ້ຂໍ້ລິເລີ່ມ “ໜຶ່ງແລວໜຶ່ງເສັ້ນທາງ” ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ທ່ານ ກາວ ກິມຮຸນ ກ່າວວ່າ ສປ ຈີນ ແມ່ນເພື່ອນມິດທີ່ດີຂອງອາຊຽນ; ອາຊຽນຍິນດີຮ່ວມກັບ ສປ ຈີນ ໃນການສົ່ງເສີມການເຈລະຈາກ່ຽວກັບເຂດການຄ້າເສລີ 3.0; ຊຸກຍູ້ການປຶກສາຫາລືຕໍ່ກັບກົດແຫ່ງການປະພຶດຢູ່ທະເລຈີນໃຕ້; ຮ່ວມກັນປົກປັກຮັກສາຄວາມໝັ້ນຄົງຂອງພາກພື້ນ ແລະ ຊຸກຍູ້ຄວາມຈະເລີນຮຸ່ງເຮືອງຮ່ວມກັນ. ໃນວັນທີ 28/3/2023, ທ່ານ ສິນ ກາງ ກໍໄດ້ພົບປະກັບ ທ່ານ ຊຳບຣີ ອັບດຸນ ກາເດຍ, ລັດຖະມົນຕີຕ່າງປະເທດມາເລເຊຍ. ທ່ານ ກາເດຍ ກ່າວວ່າ ມາເລເຊຍ ແລະ ຈີນ ເປັນເພື່ອນມິດທີ່ແໜ້ນແຟ້ນ

ໃນທຸກສະພາບການ, ມາເລເຊຍ ຍິນດີຮ່ວມກັບຈີນ ໃນການປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບຂອງພາກພື້ນ, ຮ່ວມກັນສ້າງປະຊາຄົມຮ່ວມຊະຕາກຳຈີນ-ອາຊຽນ ທີ່ແໜ້ນແຟ້ນກວ່າເກົ່າ.

ວັນທີ 28-31/3/2023, ສປ ຈີນ ໄດ້ຈັດກອງປະຊຸມປະຈຳປີ 2023 ຂອງເວທີປຶກສາຫາລືອາຊີໂບອາວ (BOAO Forum for Asia) ທີ່ ແຂວງໄຫຫຼຳ ໂດຍມີຜູ້ເຂົ້າຮ່ວມ 2.000 ທ່ານ ຈາກ 50 ກວ່າປະເທດ ແລະ 120 ເຂດແຄວ້ນໃນໂລກ ທີ່ປິ່ນອ້ອມຫົວຂໍ້ຫຼັກ "ສາມັກຄີ ແລະ ຮ່ວມມືກັນຮັບມືກັບສິ່ງທ້າທາຍ ເປີດປະຕູສູ່ພາຍນອກ ແລະ ເຊື່ອມໂຍງເຂົ້າຫາກັນ ເພື່ອຊຸກຍູ້ການພັດທະນາໃນໂລກທີ່ຂາດຄວາມແນ່ນອນ" ແລະ ຕິດພັນກັບຫົວຂໍ້ຍ່ອຍໃນ 4 ດ້ານຄື: ການພັດທະນາ ແລະ ສ້າງຜົນປະໂຫຍດໃຫ້ທົ່ວເຖິງ; ການປົກຄອງ ແລະ ຄວາມໝັ້ນຄົງ; ພາກພື້ນ ແລະ ສາກົນ; ປັດຈຸບັນ ແລະ ອະນາຄົດ. ຊຶ່ງ ສາມາດສະຫຼຸບໄດ້ 3 ຈຸດ ສຳຄັນ ຄື: 1) ທ່ານ ຫຼີ ເຄີສຽງ, ນາຍົກລັດຖະມົນຕີ ສປ ຈີນ ໄດ້ເນັ້ນໜັກວ່າ ອາຊີ ກໍຄືທົ່ວໂລກ ກຳລັງຢູ່ໃນເສັ້ນທາງຜ່ານປະຫວັດສາດ ທີ່ຈະຕ້ອງຮ່ວມມືກັນ ເພື່ອສົ່ງເສີມ ປະຊາຄົມອາຊີ ທີ່ມີຊະຕາກຳຮ່ວມກັນ ເພື່ອສັນຕິພາບໃນພາກພື້ນ ແລະ ສາກົນ. 2) ຄາດວ່າ ອາຊີ ຈະເພີ່ມອັດຕາການຂະຫຍາຍຕົວທາງເສດຖະກິດ. 3) ເຈົ້າໜ້າທີ່ລະດັບສູງ ແລະ ຜູ້ຊ່ຽວຊານ ຮຽກຮ້ອງໃຫ້ປົກປ້ອງ ແລະ ຊຸກຍູ້ການເຊື່ອມໂຍງເສດຖະກິດຂອງພາກພື້ນ ແລະ ບໍ່ໃຫ້ ອາຊຽນ ກາຍເປັນເຄື່ອງມືຂອງຝ່າຍໃດຝ່າຍໜຶ່ງ ເພື່ອຊ່ວງຊີງອຳນາດ. 4) ເຮັດວຽກຮ່ວມກັນ ໃນການຮັກສາສິ່ງແວດລ້ອມ, ສັງຄົມ ແລະ ການປົກຄອງ (ESG). 5) ການຊ່ວຍເຫຼືອດ້ານການເງິນ ເພື່ອຫຼຸດການນຳໃຊ້ກາກບອນ ໃຫ້ເປັນສູນ ໃນປີ 2060 ຫຼື ນະໂຍບາຍພະລັງງານສີຂຽວຂອງຈີນ.

ວັນທີ 01/04/2023, ສປ ຈີນ ໄດ້ຈັດກອງປະຊຸມ China Development ເປັນເວທີປຶກສາຫາລືກ່ຽວກັບການລົງທຶນໃນ ສປ ຈີນ. ມີຜູ້ເຂົ້າຮ່ວມຫຼາຍກວ່າ 100 ບໍລິສັດຍັກໃຫຍ່ທົ່ວໂລກ. ທ່ານ ສິນ ກ່າງ, ລັດຖະມົນຕີຕ່າງປະເທດ ສປ ຈີນ ໄດ້ກ່າວວ່າ ສປ ຈີນ ເປີດກວ້າງການລົງທຶນໂດຍຍຶດຫຼັກການຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ຢູ່ຮ່ວມກັນຢ່າງສັນຕິ.

ວັນທີ 04/04/2023, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ໄດ້ເຂົ້າຮ່ວມກອງປະຊຸມວຽກງານໂຄສະນາອົບຮົມທົ່ວພັກ ແລະ ມີຄຳເຫັນວ່າ ການຂະຫຍາຍສະມາຊິກພັກ ກໍຄືຄວາມຮັບຮູ້ຕໍ່ລັດທິມາກ-ເລນິນ, ຮຽກຮ້ອງໃຫ້ສະມາຊິກພັກ ພະຍາຍາມຮ່ວມກັນສ້າງສັງຄົມນິຍົມທີ່ທັນສະໄໝຂອງ ສປ ຈີນ ຢ່າງຮອບດ້ານ; ເນັ້ນໜັກວຽກງານການສຶກສາອົບຮົມ ແລະ ປະຕິບັດແນວຄິດສັງຄົມນິຍົມທີ່ມີສີສັນຂອງຈີນ ເພື່ອເພີ່ມທະວີຄວາມສາມັກຄີ ແລະ ຄວາມເຂັ້ມແຂງ; ຮ່ວມກັນແກ້ໄຂບັນຫາພາຍໃນພັກ; ໃກ້ຊິດຕິດແທດກັບປະຊາຊົນ ແລະ ເພີ່ມທະວີການນຳພາຂອງພັກໃຫ້ນັບມື້ນັບສູງຂຶ້ນກວ່າເກົ່າ.

## 2. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກກາ

ໃນເດືອນເມສາ 2023, ຂົງເຂດນີ້ ມີຫຼາຍເຫດການ ເພີ່ມທະວີຄວາມເຄັ່ງຕຶງຂຶ້ນ ດັ່ງນີ້:

- ວັນທີ 29/3/2023, ຄະນະກຳມະການການເລືອກຕັ້ງມຽນມາ ໄດ້ປະກາດຍຸບ 40 ພັກການເມືອງມຽນມາ ເນື່ອງຈາກບໍ່ໄດ້ລົງທະບຽນຖືກຕາມລະບຽບກົດໝາຍການເລືອກຕັ້ງສະບັບໃໝ່, ຊຶ່ງໜຶ່ງໃນນັ້ນແມ່ນພັກສັນນິບາດແຫ່ງຊາດເພື່ອປະຊາທິປະໄຕ (NLD) ຂອງ ທ່ານ ນາງ ອອງຊານ ຊູຈີ. ຕາມກົດໝາຍການເລືອກຕັ້ງສະບັບໃໝ່ຂອງລັດຖະບານມຽນມາ ກຳນົດວ່າ ພັກການເມືອງຕ້ອງມີສະມາຊິກພັກຢ່າງໜ້ອຍ 100.000 ຄົນ ຈຶ່ງສາມາດຈັດຕັ້ງພັກໄດ້. ກ່ອນໜ້ານີ້ລັດຖະບານ ມຽນມາ ໄດ້ປະກາດພາວະສຸກເສີນເປັນເວລາ 2 ປີ ແລະ ເລື່ອນແຜນການເລືອກຕັ້ງທີ່ກຳນົດໄວ້ໃນເດືອນສິງຫາ 2023 ອອກໄປຢ່າງບໍ່ມີກຳນົດ ໂດຍໃຫ້ເຫດຜົນວ່າສະພາບການພາຍໃນປະເທດຍັງບໍ່ທັນມີຄວາມສະຫງົບ ແລະ ບໍ່ທັນສາມາດຄວບຄຸມປະເທດໄດ້ພຽງພໍສຳລັບການເລືອກຕັ້ງ. ນອກຈາກນັ້ນ, ກອງທັບມຽນມາ ໄດ້ໂຈມຕີທາງອາກາດ ໃສ່ບ້ານ ປາຊີຈີ ທາງພາກຕາເວັນຕົກຂອງປະເທດ ໃນວັນທີ 11 ເມສາ 2023 ເພື່ອໂຈມຕີໃສ່ບ່ອນເກັບອາວຸດຂອງກອງກຳລັງພິທັກປະຊາຊົນ ຫຼື PDF ທີ່ກອງທັບມຽນມາ ປະກາດວ່າເປັນກຸ່ມກໍ່ການຮ້າຍ, ເຮັດໃຫ້ມີຜູ້ເສຍຊີວິດ ປະມານ 100 ຄົນ ແລະ ວ່າ ບໍ່ມີຄວາມປະສົງຈະໂຈມຕີປະຊາຊົນ ແຕ່ຢ່າງໃດ. ແນວໃດກໍຕາມ, ປະຊາຄົມໂລກ ລວມທັງຂ້າຫຼວງໃຫຍ່ເພື່ອມະນຸດສະທຳ ສະຫະປະຊາຊາດ ໄດ້ປະນາມວ່າ ການກະທຳດັ່ງກ່າວ ເປັນການລະເມີດກົດໝາຍສາກົນ; ອາເມລິກາ ໄດ້ປະນາມວ່າ ເປັນການໂຈມຕີປະຊາຊົນທີ່ຮ້າຍແຮງ ແລະ ຮຽກຮ້ອງໃຫ້ມີການຢຸດຕິຄວາມຮຸນແຮງດັ່ງກ່າວ ແລະ ເປີດທາງໃຫ້ມີການເຂົ້າໄປຊ່ວຍເຫຼືອດ້ານມະນຸດຊະທຳ. ອົງກອນດ້ານມະນຸດ

ຊະທຳສາກົນ ຮຽກຮ້ອງໃຫ້ປະຊາຄົມໂລກ ຢຸດຕິການສົ່ງອອກນ້ຳມັນເຊື້ອໄຟ, ຢຸດໂທປະກອນທາງທະຫານ ໃຫ້ແກ່ກອງທັບມຽນມາ.

- ລະຫວ່າງວັນທີ 11-18/4/2023, ອາເມລິກາ ແລະ ຟີລິບປິນ ໄດ້ຮ່ວມກັນຊ້ອມຮົບ, ຊຶ່ງທັງສອງຝ່າຍ ລ້ວນອ້າງວ່າ ເປັນການຝຶກຊ້ອມປະຈຳປີ ໂດຍມີທະຫານເຂົ້າຮ່ວມທັງໝົດ 17,600 ຄົນ ແລະ ຍັງມີທະຫານເຮືອອົດສະຕຣາລີມາຮ່ວມອີກ 100 ກວ່າຄົນ ແລະ ມີ 12 ປະເທດ ເຂົ້າຮ່ວມເປັນຜູ້ສັງເກດການ. ການຊ້ອມຮົບດັ່ງກ່າວ ເກີດຂຶ້ນພາຍຫຼັງ ສປ ຈີນ ສຳເລັດການຊ້ອມຮົບອ້ອມຮອບໄຕຫວັນ ເພື່ອຕອບໂຕ້ທີ່ຜູ້ບໍລິຫານເຂດປົກຄອງພິເສດຂອງໄຕຫວັນ ພົບປະກັບປະທານສະພາຕ່ຳອາເມລິກາໃນຕົ້ນເດືອນ 4/2023 ຜ່ານມາ ແລະ ເກີດຂຶ້ນ ພາຍຫຼັງ ອາເມລິກາ ແລະ ຟີລິບປິນ ໄດ້ເຮັດສັນຍາທາງທະຫານຮ່ວມກັນສະບັບໃໝ່ໃນເດືອນ 2/2023 ທີ່ອະນຸຍາດໃຫ້ທະຫານອາເມລິກາສາມາດເຂົ້າເຖິງຖານທັບຂອງຟີລິບປິນອີກ 4 ແຫ່ງ ລວມທັງໝົດ 9 ແຫ່ງ. ໄຕຫວັນ ໄດ້ເປີດເຜີຍສັນຍາຊື້ຂີປະນາວຸດຈາກອາເມລິກາ 400 ລູກ ລວມມູນຄ່າ 1170 ລ້ານໂດລາສະຫະລັດ. ກ່ອນໜ້ານີ້, ອາເມລິກາ, ສ. ເກົາຫຼີ ແລະ ຍີ່ປຸ່ນກໍໄດ້ຮ່ວມກັນຊ້ອມຮົບທາງທະເລ ອ້າງວ່າເພື່ອກຽມຄວາມພ້ອມໃນການປ້ອງກັນຂີປະນາວຸດຈາກ ສປປ ເກົາຫຼີ. ນອກຈາກນັ້ນ, ກອງທັບອາກາດຂອງອາເມລິກາ ແລະ ສ. ເກົາຫຼີ ກໍເລີ່ມຊ້ອມຮົບທາງອາກາດ ເປັນເວລາ 12 ມື້ ເລີ່ມແຕ່ວັນທີ 17/4/2023 ເປັນຕົ້ນໄປ. ສ່ວນ ລັດເຊຍ ກໍໄດ້ຊ້ອມຮົບທາງທະເລ ເລີ່ມວັນທີ 14/4/2023 ເປັນຕົ້ນມາ ໃນເຂດຕາເວັນອອກໄກ ໃກ້ກັບເຂດທີ່ມີຄວາມຂັດແຍ່ງລະຫວ່າງລັດເຊຍ ແລະ ຍີ່ປຸ່ນ.

-ວັນທີ 01/04/2023, ທ່ານ Pedro Sanchez, ນາຍົກລັດຖະມົນຕີແອັດສະປາຍ ໄດ້ຢ້ຽມຢາມ ສປ ຈີນ ຢ່າງເປັນທາງການ ແລະ ພົບປະກັບ ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ. ສອງຝ່າຍໄດ້ປຶກສາຫາລືກັນຫຼາຍບັນຫາ ໂດຍສະເພາະຂໍ້ຂັດແຍ່ງອູແກຣນ-ລັດເຊຍ. ທ່ານ ສີ ຈິ້ນຜິງ ໄດ້ຮຽກຮ້ອງໃຫ້ຕາເວັນຕົກຢຸດຕິແນວຄິດສົງຄາມເຢັນ, ການຂວ້ຳບາດຝ່າຍດຽວ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນຂໍ້ຂັດແຍ່ງອູແກຣນ-ລັດເຊຍ ຄວນຈະແກ້ໄຂບັນຫາດ້ວຍສັນຕິວິທີ. ທ່ານ Pedro Sanchez ກ່າວວ່າ ແອັດສະປາຍສະໜັບສະໜູນຕໍ່ຂໍ້ສະເໜີສັນຕິພາບຂອງ ສປ ຈີນ, ສະເໜີໃຫ້ຜູ້ນຳ ສປ ຈີນ ພົບປະຫາລືແບບເຊິ່ງໜ້າກັບຜູ້ນຳອູແກຣນ.

-ວັນທີ 01/04/2023, ທ່ານ ຫຼີ ສຽງ, ນາຍົກລັດຖະມົນຕີ ສປ ຈີນ ໄດ້ພົບປະກັບ ທ່ານ Anwar Ibrahim, ນາຍົກລັດຖະມົນຕີມາເລເຊຍ. ທ່ານ ຫຼີ ສຽງ ໄດ້ກ່າວວ່າ ສປ ຈີນ ແລະ ມາເລເຊຍ ໄດ້ສົ່ງເສີມທ່າແຮງຂອງຕົນໃນການພັດທະນາປະເທດຊາດ, ສະເໜີໃຫ້ສອງຝ່າຍຊຸກຍູ້ການຄ້າ-ການລົງທຶນຮ່ວມກັນໃຫ້ຢູ່ໃນລະດັບທີ່ສູງກວ່າເກົ່າ, ເພີ່ມທະວີການຮ່ວມມືທາງດ້ານການສຶກສາ, ກະສິກຳ, ວັດທະນະທຳ-ທ່ອງທ່ຽວ ແລະ ອື່ນໆ. ສປ ຈີນ ຍິນດີຮ່ວມມືກັບບັນດາປະເທດອາຊຽນ ໃນການແກ້ໄຂບັນຫາທະເລຈີນໃຕ້ບົນພື້ນຖານກົດແຫ່ງການປະພຶດຢູ່ທະເລຈີນໃຕ້, ຮ່ວມກັນຮັກສາສັນຕິພາບ ແລະ ສະຖຽນລະພາບໃນຂົງເຂດດັ່ງກ່າວ. ທ່ານ Anwar Ibrahim ກ່າວວ່າ ມາເລເຊຍ ຊຸກຍູ້ຫຼັກການຈີນດຽວຢ່າງເດັດດ່ຽວ, ສະໜັບສະໜູນຂໍ້ລິເລີ່ມການພັດທະນາຂອງໂລກ, ເຫັນດີການຮ່ວມມືໃນກອບໜຶ່ງແລວໜຶ່ງເສັ້ນທາງ, ຮ່ວມກັນປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບຢູ່ທະເລຈີນໃຕ້.

- ວັນທີ 02/04/2023, ທ່ານ Yoshimasa Hayashi, ລັດຖະມົນຕີຕ່າງປະເທດຍີ່ປຸ່ນ ໄດ້ພົບປະກັບ ທ່ານ ສິນກ່າງ, ລັດຖະມົນຕີຕ່າງປະເທດຈີນ ເພື່ອປຶກສາຫາລືກ່ຽວກັບສາຍພົວພັນ ສປ ຈີນ-ຍີ່ປຸ່ນ ແລະ ສະເຫຼີມສະຫຼອງສົນທິສັນຍາສັນຕິພາບ ແລະ ມິດຕະພາບຂອງສອງປະເທດ ຄົບຮອບ 45 ປີ. ທ່ານ Hayashi ໄດ້ທັກທ້ວງຕໍ່ການຈັບກຸມພະນັກງານບໍລິສັດການຢາ Astella Pharma ຂອງຍີ່ປຸ່ນໃນຂໍ້ຫາການເປັນສາຍລັບ ແລະ ໄດ້ຮຽກຮ້ອງໃຫ້ປ່ອຍໂຕພວກກ່ຽວ. ຂະນະທີ່, ທ່ານ ສິນ ກ່າງ ກ່າວວ່າ ຄົນຍີ່ປຸ່ນທີ່ຖືກຈັບກຸມແມ່ນຈະຖືກດຳເນີນຄະດີຕາມກົດໝາຍຂອງ ສປ ຈີນ, ພ້ອມທັງກ່າວເຕືອນວ່າ ຍີ່ປຸ່ນ ບໍ່ຄວນແຊກແຊງໃນບັນຫາໄຕຫວັນ, ການຈຳກັດການສົ່ງອອກ Semiconductor ຂອງ ຍີ່ປຸ່ນ ທີ່ຕ້ອງການຈຳກັດການຜະລິດຊິບຂັ້ນສູງຂອງ ສປ ຈີນ. ພ້ອມນີ້, ສອງຝ່າຍເຫັນດີສືບຕໍ່ການພົວພັນໃນທຸກລະດັບ ແລະ ພ້ອມຈະແກ້ໄຂບັນຫາຮ່ວມກັນ.

- ວັນທີ 06/04/2023, ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ ແລະ ທ່ານ ນາງ Ursula von der Leyen, ປະທານຄະນະກຳມະທິການເອີຣົບ ໄດ້ຢ້ຽມຢາມຈີນ, ພົບປະກັບ ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ສປ ຈີນ. ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າໃນປີນີ້ເປັນປີຄົບຮອບການສ້າງສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ສປ ຈີນ-ເອີຣົບ ຄົບຮອບ 20 ປີ; ສປ ຈີນ ຍິນດີສືບຕໍ່ຮ່ວມມືກັບເອີຣົບ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດໃນຂົງເຂດຕ່າງໆ; ຄວາມທັນສະໄໝແບບ ສປ ຈີນ

ແລະ ການເຊື່ອມໂຍງກັບເອີຣົບແມ່ນຍຸດທະສາດຮ່ວມກັນຂອງສອງຝ່າຍ, ຫຼີກລ່ຽງການຫັນບັນຫາເສດຖະກິດ ເປັນບັນຫາທາງການເມືອງ, ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ ແລະ ເຊື່ອມໂຍງຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ ກັບຍຸດທະສາດການເປີດປະຕູສູ່ທົ່ວໂລກຂອງເອີຣົບ. ສ່ວນ ທ່ານ ນາງ Leyen ກ່າວວ່າ ເອີຣົບ ຍິນດີຮ່ວມກັບ ສປ ຈີນ ເພື່ອຍົກລະດັບການຮ່ວມມືທາງດ້ານເສດຖະກິດໃຫ້ໝັ້ນຄົງ, ເພີ່ມທະວີການປະສານງານຮ່ວມກັນເພື່ອຮັບມືກັບສິ່ງທ້າທາຍຕ່າງໆ, ຊຸກຍູ້ສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາຂອງໂລກ. ທ່ານ Macron ກ່າວວ່າ ປັດຈຸບັນ ໂລກບໍ່ມີຄວາມແນ່ນອນ, ເອີຣົບ-ສປ ຈີນ ຄວນເພີ່ມທະວີການແລກປ່ຽນທີ່ຕ່າງຝ່າຍຕ່າງເຄົາລົບເຊິ່ງກັນ ແລະ ກັນ, ສືບຕໍ່ຮ່ວມມືກັນຢ່າງສະເໝີພາບ, ແກ້ໄຂສິ່ງທ້າທາຍ ແລະ ສົ່ງເສີມການພົວພັນຮ່ວມມືຍຸດທະສາດຮອບດ້ານເອີຣົບ-ສປ ຈີນ ຢ່າງບໍ່ຢຸດຢັ້ງ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ສະພາບການຂໍ້ຂັດແຍ່ງອູແກຣນ-ລັດເຊຍ ຍັງສືບຕໍ່ເພີ່ມທະວີຄວາມຮຸນແຮງ ໂດຍສະເພາະຢູ່ເມືອງ Bakhmut, ຊຶ່ງເປັນເມືອງຍຸດທະສາດສຳຄັນ, ເປັນເມືອງໃຫຍ່ອັນດັບ 2 ຂອງ ອູແກຣນ, ຍັງປະທະກັນຢ່າງໜັກຕໍ່ເນື່ອງ. ປະທານາທິບໍດີອູແກຣນ ໄດ້ໄປຢ້ຽມຢາມໂປໂລຍ ເພື່ອຂໍໃຫ້ ໂປໂລຍ ຊຸກຍູ້ບັນດາປະເທດນາໂຕ້ ສົ່ງທະຫານ ແລະ ອາວຸດໜັກຊ່ວຍອູແກຣນ ເພີ່ມຕື່ມ. ຂະນະດຽວກັນ, ກຸ່ມນາໂຕ້ ໄດ້ຝຶກຊ້ອມການນຳໃຊ້ລົດຖັງ Leoperd2 ໃຫ້ແກ່ທະຫານອູແກຣນ ຢູ່ໂປໂລຍ. ເຢຍລະມັນ ໄດ້ປະກາດຈະສົ່ງລົດຖັງ Leoperd2 ໃຫ້ອູແກຣນ ເພີ່ມອີກ 2 ຄັນ, ກ່ອນໜ້ານີ້ສົ່ງໄປແລ້ວ 18 ຄັນ, ເພີ່ມລົດບັນທຸກ 8 ຄັນ, ໂດຣນສອດແນມ 8 ລຳ ແລະ ລູກປືນ ອີກ 23,000 ລູກ. ນອກຈາກນັ້ນ, ວັນທີ 22 ເມສາ 2023, ເຢຍລະມັນ ໄດ້ຂັບໄລ່ນັກການທູດລັດເຊຍ 20 ຄົນ ອອກຈາກປະເທດ, ຊຶ່ງທາງການລັດເຊຍ ໄດ້ກ່າວປະນາມການກະທຳດັ່ງກ່າວ ວ່າ ເຢຍລະມັນ ຕັ້ງໃຈທຳລາຍສາຍພົວພັນທາງການທູດລະຫວ່າງເຢຍລະມັນ ແລະ ລັດເຊຍ, ແລະ ທາງການລັດເຊຍ ກໍໄດ້ຕອບໂຕ້ໃນລັກສະນະດຽວກັນ. ໃນກອງປະຊຸມລັດຖະມົນຕີຕ່າງປະເທດຂອງກຸ່ມປະເທດ G7 ທີ່ຈັດຂຶ້ນຢູ່ຍີ່ປຸ່ນ ໃນວັນທີ 15-16/4/2023 ໄດ້ອອກຖະແຫຼງການຮ່ວມ ລະບຸວ່າ ບໍ່ອະນຸຍາດໃຫ້ປະເທດໃດສົ່ງອາວຸດ ສະໜັບສະໜູນລັດເຊຍ ແລະ ບໍ່ໃຫ້ເກີດສົງຄາມນິວເຄຼຍ ແລະ ບໍ່ຊື້ນ້ຳມັນຈາກລັດເຊຍ. ແນວໃດກໍຕາມ, ເຖິງແມ່ນວ່າ ບັນດາປະເທດຕາເວັນຕົກ ນັບມື້ນັບເພີ່ມການຂວ້ຳບາດດ້ານພະລັງງານຂອງລັດເຊຍ, ແຕ່ລັດເຊຍ ຍັງສາມາດມີຕະຫຼາດສົ່ງອອກນ້ຳມັນ ໄດ້ຫຼາກຫຼາຍ, ຊຶ່ງຂໍ້ມູນຈາກອົງການພະລັງງານສາກົນ (IEA) ໄດ້ເປີດເຜີຍວ່າ ການສົ່ງອອກນ້ຳມັນຂອງລັດເຊຍ ໃນເດືອນ ມີນາ 2023 ສູງສຸດໃນຮອບ 3 ປີ ຈາກ 6 ແສນ ບາເຣວຕໍ່ວັນ ເປັນ 8.1 ລ້ານບາເຣວ ຕໍ່ວັນ. ໃນນັ້ນ, ອິນເດຍ ນຳເຂົ້ານ້ຳມັນຈາກລັດເຊຍ 1.64 ລ້ານບາເຣວ ຕໍ່ວັນ, ເຮັດໃຫ້ ລັດເຊຍ ກາຍເປັນຜູ້ສະໜອງນ້ຳມັນຫຼາຍທີ່ສຸດແກ່ອິນເດຍ ຕັ້ງແຕ່ເດືອນ ມີນາ 2023 ເປັນຕົ້ນມາ.

ໃນວັນທີ 4-5/4/2023, ກອງປະຊຸມລັດຖະມົນຕີຕ່າງປະເທດນາໂຕ້ ໄດ້ເຫັນດີຮັບເອົາ ແຟງລັງ ເຂົ້າເປັນສະມາຊິກນາໂຕ້ເປັນປະເທດທີ 31 ຢ່າງເປັນທາງການ. ຊຶ່ງ ແຟງລັງມີຊາຍແດນຕິດກັບພາກຕາເວັນຕົກຂອງລັດເຊຍ 1.300 ກິໂລແມັດ ແລະ ບັນດາປະເທດສະມາຊິກນາໂຕ້ໃນຂົງເຂດດັ່ງກ່າວ ມີຊາຍແດນຕິດກັບລັດເຊຍ 2.400 ກິໂລແມັດ ເຮັດໃຫ້ລັດເຊຍ ຈຳເປັນຕ້ອງໄດ້ເພີ່ມກຳລັງທະຫານເຂົ້າໃນຂົງເຂດດັ່ງກ່າວ ເພື່ອປ້ອງກັນໄພຄຸກຄາມຈາກນາໂຕ້ ແລະ ອາວຸດນິວເຄຼຍທາງຍຸດທະວິທີ ຈຳນວນໜຶ່ງຂອງລັດເຊຍຈະຖືກຕິດຕັ້ງຢູ່ ເບຣາລຸດຊີ. ວັນທີ 21/4/2023, ທ່ານ Jens Stoltenberg, ເລຂາທິການ NATO ໄດ້ເດີນທາງໄປອູແກຣນ ຄັ້ງທຳອິດ ນັບແຕ່ເກີດຄວາມຂັດແຍ່ງ, ພົບກັບປະທານາທິບໍດີ ເຊເລັນສະກີ, ຊຶ່ງ ທ່ານ ເຊເລັນສະກີ ໄດ້ຮຽກຮ້ອງໃຫ້ NATO ພິຈາລະນາຄຳຮ້ອງຂໍເຂົ້າເປັນສະມາຊິກ ໃນເດືອນ ກັນຍາ 2022 ຜ່ານມາ, ຂະນະທີ່ ເລຂາທິການ NATO ໄດ້ຢືນຢັນວ່າ ອູແກຣນ ສາມາດເຂົ້າເປັນສະມາຊິກ NATO ໃນອະນາຄົດ. ສ່ວນ ຊູແອັດ ທີ່ຍັງບໍ່ໄດ້ເປັນສະມາຊິກ NATO ຕາມການສະເໜີ ຕັ້ງແຕ່ເດືອນ ພຶດສະພາ 2022 ຜ່ານມາ, ໄດ້ເລີ່ມຊ້ອມຮົບ ຮ່ວມກັບບັນດາປະເທດສະມາຊິກ NATO, ເປັນການຊ້ອມຮົບຂະໜາດໃຫຍ່ທີ່ສຸດ ທັງທາງບົກ, ທາງນ້ຳ ແລະ ທາງອາກາດ ໃນຮອບ 25 ປີ ແລະ ຈະດຳເນີນແຕ່ວັນທີ 24 ເມສາ ເຖິງ 11 ພຶດສະພາ 2023 ໂດຍໃສ່ຊື່ວ່າ AURORA 2023 ໂດຍມີທະຫານ 26,000 ຄົນ ເຂົ້າຮ່ວມ ຊຶ່ງທະຫານຫຼັກແມ່ນທະຫານຊູແອັດ.

ຄຽງຄູ່ກັບສະຖານະການທີ່ເກີດຂຶ້ນ, ລັດເຊຍ ໄດ້ປ່ອຍຊະເລີກເສິກອູແກຣນ 130 ຄົນ ກັບຄືນປະເທດ, ໃນໄລຍະຕົ້ນເດືອນ ເມສາ 2023 ຜ່ານມາ ສອງຝ່າຍ ໄດ້ແລກປ່ຽນຊະເລີກເສິກນຳກັນ, ມີທະຫານອູແກຣນ 100 ຄົນ, ສ່ວນລັດເຊຍ ມີ 106 ຄົນ. ນອກຈາກນັ້ນ, ວັນທີ 01/04/2023, ທ່ານ Vladimir Putin, ປະທານາທິບໍດີຂອງລັດເຊຍ ໄດ້ປະກາດແຜນຍຸດທະສາດການຕ່າງປະເທດ ສະບັບປັບປຸງໃໝ່. ເນື້ອໃນຕົ້ນຕໍແມ່ນແນໃສ່ສະກັດກັ້ນການຄອບງຳຂອງອາເມລິກາ ແລະ ຕາເວັນຕົກ. ລັດເຊຍ ຈະສູ້ຊົນເພື່ອໃຫ້ທຸກລັດປະຕິເສດລັດທິລ່າເມືອງຂຶ້ນແບບໃໝ່ ແລະ ມີເປົ້າໝາຍຢາກເປັນເຈົ້າໂລກ; ພະຍາຍາມຂະຫຍາຍການຮ່ວມມືທາງການເມືອງ ແລະ ເສດຖະກິດກັບບັນດາປະເທດໃນອາຟຣິກກາ ແລະ ອາຊີ ໂດຍຍົກສູງ ສປ ຈີນ ແລະ ອິນເດຍ ທີ່ມີທັດສະນະເປັນກາງ ແລະ ກຳນົດວ່າອາເມລິກາເປັນໄພຂົ່ມຂູ່ອັນໃຫຍ່ຫຼວງຕໍ່ສະຖຽນລະພາບ, ຄວາມໝັ້ນຄົງ, ສັນຕິພາບ, ການພັດທະນາທີ່ສົມດຸນ ແລະ ຍືນຍົງຂອງມວນມະນຸດ.

ວັນທີ 18 ເມສາ 2023 ຜ່ານມາ, ທ່ານ ປູຕິນ ຍັງໄດ້ຢ້ຽມຢາມ ເມືອງ kherson, ໜຶ່ງໃນ 4 ເມືອງ ຂອງອູແກຣນ ທີ່ລົງປະຊາມະຕິຂຶ້ນກັບລັດເຊຍ ໃນໄລຍະເດືອນ ກັນຍາ 2022 ຜ່ານມາ ເພື່ອຕິດຕາມສະຖານະການ ແລະ ປະເມີນສະພາບການປະຕິບັດການພິເສດທາງທະຫານຂອງລັດເຊຍ ໃນເມືອງດັ່ງກ່າວ.

ລັດເຊຍ ໄດ້ຕ້ອນຮັບ ທ່ານ Li Shangfu, ລັດຖະມົນຕີກະຊວງປ້ອງກັນປະເທດຄົນໃໝ່ຂອງຈີນ ວັນທີ 17-19 ເມສາ 2023, ເປັນການເດີນທາງຢ້ຽມຢາມຕ່າງປະເທດຄັ້ງທຳອິດ ຂອງລັດຖະມົນຕີກະຊວງປ້ອງກັນປະເທດຈີນ, ສະແດງໃຫ້ເຫັນຄວາມພິເສດຂອງການພົວພັນຍຸດທະສາດລະຫວ່າງ ຈີນ ແລະ ລັດເຊຍ; ທັງເປັນການຜັນຂະຫຍາຍຜົນການຢ້ຽມຢາມ ແລະ ພົບປະ ຂອງສອງຜູ້ນຳ ສປ ຈີນ-ລັດເຊຍ ໃນເດືອນ ມີນາ 2023 ຜ່ານມາ. ທ່ານ Li Shangfu ໄດ້ເຂົ້າຢ້ຽມຂໍ່ານັບປະທານາທິບໍດີ ປູຕິນ ແລະ ພົບກັບລັດຖະມົນຕີປ້ອງກັນປະເທດຂອງລັດເຊຍ. ສອງຝ່າຍ ໄດ້ເຫັນດີຮ່ວມມືດ້ານການທະຫານ ໃຫ້ເຂັ້ມແຂງ ແລະ ໝັ້ນຄົງຮ່ວມກັນ. ໃນນັ້ນ ທ່ານ ປູຕິນ ຍັງເນັ້ນວ່າ ການພົວພັນຂອງສອງປະເທດ ກຳລັງມີບາດກ້າວທີ່ດີໃນທຸກດ້ານ ທັງເສດຖະກິດ, ສັງຄົມ, ການສຶກສາ, ວັດທະນະທຳ ລວມທັງດ້ານການທະຫານ, ມີການແລກປ່ຽນຂໍ້ມູນຂ່າວສານຢ່າງຕໍ່ເນື່ອງ.

ທ່ານ Sergei Lavrov, ລັດຖະມົນຕີຕ່າງປະເທດລັດເຊຍ ໄດ້ເດີນທາງຢ້ຽມຢາມເບຣຊິນ ພົບປະກັບຄູ່ຮ່ວມຕຳແໜ່ງ ແລະ ພົບກັບປະທານາທິບໍດີເບຣຊິນ ໃນວັນທີ 17/4/2023. ທ່ານ Sergei Lavrov ໄດ້ກ່າວວ່າ ລັດເຊຍ ມີຄວາມພ້ອມທີ່ຈະຢຸດຕິຄວາມຂັດແຍ່ງກັບອູແກຣນ ໃຫ້ໄວທີ່ສຸດ ແລະ ໄດ້ສະແດງຄວາມຂອບໃຈເບຣຊິນ ທີ່ເຂົ້າໃຈຕໍ່ສະຖານະການທີ່ເກີດຂຶ້ນ ແລະ ຢາກເປັນສ່ວນໜຶ່ງໃນການແກ້ໄຂຄວາມຂັດແຍ່ງດັ່ງກ່າວ. ທ່ານ Sergei Lavrov ກໍໄດ້ເດີນທາງຕໍ່ ຢ້ຽມຢາມກູບາ, ນິກາຣາກົວ ແລະ ເວເນຊູເອລາ.

**3). ກອງປະຊຸມລັດຖະມົນຕີຕ່າງປະເທດ G7**

ວັນທີ 15-16 ເມສາ, ກອງປະຊຸມລັດຖະມົນຕີຕ່າງປະເທດ ກຸ່ມ G7 ໄດ້ຈັດຂຶ້ນຢູ່ ຍີ່ປຸ່ນ, ໄດ້ປຶກສາຫາລືກ່ຽວກັບ ສະຖານະການໃນພາກພື້ນອິນໂດ-ປາຊີຟິກ ແລະ ຄັດຄ້ານຕໍ່ຄວາມພະຍາຍາມຝ່າຍດຽວທີ່ຈະປ່ຽນແປງສະຖານະພາບດ້ວຍກຳລັງ ລວມທັງຢືນຢັນເຖິງຄວາມສຳຄັນຂອງສັນຕິພາບ ແລະ ສະຖຽນລະພາບ ໃນຊ່ອງແຄບໄຕຫວັນ; ໄດ້ຫາລືກ່ຽວກັບຄວາມຂັດແຍ່ງ ອູແກຣນ - ລັດເຊຍ ໂດຍຈະຮັກສາຄວາມເປັນເອກະພາບໃນການຂວ້ຳບາດ ລັດເຊຍ ແລະ ຈະໃຫ້ການສະໜັບສະໜູນອູແກຣນຢ່າງຕໍ່ເນື່ອງ ແລະ ຈະບໍ່ໃຫ້ປະເທດທີສາມ ສົ່ງອາວຸດໃຫ້ແກ່ ລັດເຊຍ; ເຫັນດີຈະເພີ່ມທະວີການຮ່ວມມື ກັບ ອິນເດຍ ໃນການຊ່ວຍເຫຼືອປະເທດພັດທະນາໃໝ່ ແລະ ປະເທດກຳລັງພັດທະນາ ເພື່ອຮັບປະກັນຄວາມໝັ້ນຄົງດ້ານພະລັງງານ ແລະ ຄວາມໝັ້ນຄົງທາງອາຫານໃຫ້ແກ່ປະເທດເຫຼົ່ານັ້ນ; ຍັງໄດ້ປຶກສາຫາລືກ່ຽວກັບການຫຼຸດຜ່ອນ ແລະ ບໍ່ແຜ່ຂະຫຍາຍອາວຸດນິວເຄລຍ, ສະພາບການລາຄາອາຫານ ແລະ ພະລັງງານໃນອາຟຣິກກາ.

**4). ສະພາບການເມືອງ ໃນຊູດັງ, ທະວີບອາຟຣິກກາ**

ນັບແຕ່ວັນທີ 15 ເມສາ 2023 ເປັນຕົ້ນມາ, ໄດ້ມີການຕໍ່ສູ້ຢ່າງຮຸນແຮງ ລະຫວ່າງ ກອງທັບຊູດັງ ແລະ ກອງທະຫານສະໜັບສະໜູນເຄື່ອນທີ່ໄວ (RSF) ໃນນະຄອນຫຼວງຄາຕຸມ ຂອງຊູດັງ ເຮັດໃຫ້ມີຜູ້ເສຍຊີວິດ ຢ່າງໜ້ອຍ 413 ຄົນ ແລະ ບາດເຈັບຫຼາຍກວ່າ 3500 ຄົນ. RSF ອ້າງວ່າ ສາມາດຍຶດສຳນັກງານປະທານາທິບໍດີ, ສະໜາມບິນ ແລະ ສະຖານທີ່ສຳຄັນອື່ນໆ ລວມທັງສູນບັນຊາການທະຫານຂອງກອງທັບຊູດັງ, ແຕ່ກອງທັບຊູດັງ ໄດ້ປະຕິເສດວ່າ ບໍ່ມີມູນຄວາມຈິງແຕ່ຢ່າງໃດ, ພ້ອມທັງເນັ້ນວ່າ ກອງທັບຊູດັງ ຈະບໍ່ເຈລະຈາໃດໆກັບ RSF ຈົນກວ່າ RSF ຈະໝົດໄປ ຫຼື ຍອມຈຳນົນ. ເຖິງຈະມີຂໍ້ຕົກລົງຢຸດຍິງ 24 ຊົ່ວໂມງ ທີ່ມີອາເມລິກາເປັນສື່ກາງນັ້ນ ແຕ່ບໍ່ໄດ້ຮັບຜົນໃດໆ ເນື່ອງຈາກ

ສອງຝ່າຍດັ່ງກ່າວ ສືບຕໍ່ປະທະກັນຢ່າງດຸເດືອດ ແລະ ວ່າ ປັດຈຸບັນ ຍັງບໍ່ຕ້ອງການໃຫ້ຝ່າຍໃດ ລວມທັງສະຫະປະຊາຊາດ ເຂົ້າມາມີບົດບາດແກ້ໄຂສະຖານະການເທື່ອ. ແນວໃດກໍຕາມ, ອົງການອະນາໄມໂລກ ແລະ ສະຫະປະຊາຊາດ ໄດ້ຮຽກຮ້ອງໃຫ້ສອງຝ່າຍຢຸດຍິງ 3 ວັນ ເພື່ອໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ຊ່ວຍອົບພະຍົບປະຊາຊົນ ອອກຈາກພື້ນທີ່ສູ້ຮົບ ໂດຍໄວ. ຫຼາຍປະເທດ ໄດ້ສະແດງຄວາມກັງວົນຕໍ່ສະຖານະການທີ່ເກີດຂຶ້ນ ແລະ ກຽມພ້ອມຂົນຍ້າຍພົນລະເມືອງຂອງຕົນ ອອກຈາກຊູດັງ. ປະຊາຊົນອາເມລິກາ ທີ່ອາໄສຢູ່ຊູດັງ ມີປະມານ 19,000 ຄົນ. ລາຊະອານາຈັກອັງກິດ ກໍກຽມພ້ອມໃຫ້ການຊ່ວຍເຫຼືອນັກການທູດ ແລະ ປະຊາຊົນຂອງຕົນ ຫຼາຍຮ້ອຍຄົນ ທີ່ອາໄສຢູ່ຊູດັງ. ສະຫະພາບເອີລົບ ມີພົນລະເມືອງຂອງຕົນປະມານ 1500 ຄົນ ໃນຊູດັງ. ສ່ວນ ລາຊະອານາຈັກໄທ ແລະ ຍີ່ປຸ່ນ ຕ່າງພາກັນໃຫ້ການຊ່ວຍເຫຼືອ ແລະ ອົບພະຍົບພົນລະເມືອງຂອງຕົນ ໄປຍັງເຂດປອດໄພ ຫຼື ຊ່ວຍເຫຼືອກັບປະເທດຂອງພວກກ່ຽວແລ້ວ.

ຄວາມຮຸນແຮງດັ່ງກ່າວ ເກີດຂຶ້ນຍ້ອນການຍາດຊີງອຳນາດໃນການບໍລິຫານປະເທດ, ຊຶ່ງພາຍຫຼັງກອງທັບຊູດັງເຮັດລັດຖະປະຫານຍຶດອຳນາດ ຈາກຜູ້ນຳຊູດັງຄົນເກົ່າທີ່ບໍລິຫານປະເທດຫຼາຍກວ່າ 30 ປີ. ຕໍ່ມາ ໄດ້ມີລັດຖະບານປະສົມ ລະຫວ່າງທະຫານ ກັບຜູ້ນຳພົນລະເຮືອນ ແລະ ໄດ້ຈັດຕັ້ງ ສະພາອະທິປະໄຕຂຶ້ນໃນເດືອນ ສິງຫາ 2019 ເພື່ອບໍລິຫານປະເທດ, ແຕ່ການປ່ຽນຜ່ານ ຊູດັງ ໄປສູ່ປະຊາທິປະໄຕ ໄດ້ປະເຊີນກັບບັນຫາ ຍ້ອນລັດຖະບານປະສົມດັ່ງກ່າວບໍ່ລົງລອຍກັນ ຈຶ່ງເຮັດໃຫ້ເກີດມີການກໍ່ລັດຖະປະຫານອີກຄັ້ງ ໃນເດືອນຕຸລາ 2021 ເຮັດໃຫ້ທະຫານລະດັບສູງ ເປັນຜູ້ບໍລິຫານປະເທດ. ສະເພາະເຫດການປະທະກັນຄັ້ງຫຼ້າສຸດນີ້ ເກີດຈາກການຍາດຊີງອຳນາດ ລະຫວ່າງ ຜູ້ບັນຊາການທະຫານຂອງກອງທັບຊູດັງ ແລະ ຜູ້ບັນຊາການກອງກຳລັງ RSF ໃນສະພາອະທິປະໄຕ ທີ່ບໍ່ເອກະພາບ ຕໍ່ບັນຫາພາຍໃນປະເທດ, ໂດຍສະເພາະ ແມ່ນຄວາມປະສົງຢາກເອົາ ກອງກຳລັງ RSF ມາລວມເປັນອັນດຽວກັບກອງທັບຊູດັງ ແລ້ວຈະໃຫ້ໃຜເປັນຜູ້ບັນຊາການ.

**5). ສະພາບການ ໃນຂົງເຂດຕາເວັນອອກກາງ**

ໃນວັນທີ 8 ເມສາ 2023, ຄະນະຜູ້ແທນຈາກ ອາຣັບບີ ຊາອຸດິດ ແລະ ຜູ້ແທນໂອມານ ໄດ້ເດີນທາງໄປ ເຢເມນ ເພື່ອປຶກສາຫາລືກ່ຽວກັບການຢຸດຍິງຖາວອນ ໃນເຢເມນ, ສົງຄາມກາງເມືອງ ທີ່ແກ່ຍາວ ມາແຕ່ປີ 2014. ຊຶ່ງກ່ອນໜ້ານີ້, ອາຣັບບີ ຊາອຸດິດ ແລະ ໂອເມນ ຮ່ວມກັນສະໜັບສະໜູນລັດຖະບານເຢເມນ ເພື່ອຕໍ່ສູ້ກັບກຸ່ມຮູຕີ ໃນເຢເມນທີ່ອ້າງວ່າ ອີຣານ ໃຫ້ການສະໜັບສະໜູນກຸ່ມດັ່ງກ່າວ. ການເຄື່ອນໄຫວດັ່ງກ່າວ ສະທ້ອນເຖິງບົດບາດຂອງ ສປ ຈີນທີ່ເປັນສື່ກາງໃນການເຈລະຈາ ໃຫ້ ອາຣັບບີ ຊາອຸດິດ ແລະ ອີຣານ ກັບມາສ້າງສາຍພົວພັນທາງການທູດນຳກັນອີກພາຍຫຼັງຕັດສາຍພົວພັນການທູດລະຫວ່າງກັນ ມາແຕ່ປີ 2019. ນອກຈາກນັ້ນ, ວັນທີ 18 ເມສາ 2023, ລັດຖະມົນຕີຕ່າງປະເທດ ອາຣັບບີ ຊາອຸດິດ ຍັງໄດ້ເດີນທາງຢ້ຽມຢາມຊີຣີ ເພື່ອປຶກສາຫາລືກ່ຽວກັບບັນຫາຄວາມໝັ້ນຄົງໃນພາກພື້ນຕາເວັນອອກກາງ, ເວົ້າລວມ ເວົ້າສະເພາະ ແມ່ນການຮ່ວມກັນແກ້ໄຂສົງຄາມກາງເມືອງໃນຊີຣີ. ເວົ້າລວມແລ້ວ, ສະພາບໃນຕາເວັນອອກກາງ ໄລຍະນີ້ ຢູ່ໃນທ່າອ່ຽງແຫ່ງການຮ່ວມມື, ການຟື້ນຟູສາຍພົວພັນເຊິ່ງກັນແລະກັນ ເພື່ອຜົນປະໂຫຍດຮ່ວມກັນຂອງບັນດາປະເທດໃນພາກພື້ນ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

## II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

### 1. ຄະນະຜູ້ແທນຂັ້ນສູງຂອງຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ເຂົ້າຢ້ຽມຂໍ່ານັບ ການນໍາຂັ້ນສູງ ພັກ, ລັດ ສສ ຫວຽດນາມ



ວັນທີ 20 ເມສາ 2023 ທີ່ສຳນັກງານປະທານປະເທດ ຫວຽດນາມ, ສະຫາຍ ຫວໍວັນເຖື້ອງ, ກຳມະການກົມການເມືອງສູນກາງພັກ, ປະທານປະເທດແຫ່ງ ສສ ຫວຽດນາມ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ຄະນະຜູ້ແທນຂັ້ນສູງຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ເນື່ອງໃນໂອກາດໄປຢ້ຽມຢາມເຮັດວຽກ ແລະ ເຂົ້າຮ່ວມງານພົບປະມິດຕະພາບ ຄັ້ງທີ X ລະຫວ່າງ ສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຫວຽດນາມ ແລະ ແຂວງເທື່ອທຽນເຫວ້, ສສ ຫວຽດນາມ. ສະຫາຍ ຫວໍວັນເຖື້ອງ ໄດ້ສະແດງຄວາມປິຕິຍິນດີໃນການຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ພ້ອມດ້ວຍຄະນະ ທີ່ໄດ້ເດີນທາງຢ້ຽມຢາມ ສສ ຫວຽດນາມ ແລະ ເຮັດວຽກກັບ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ເປັນຄັ້ງທຳອິດພາຍຫຼັງໄດ້ຮັບໜ້າທີ່ໃໝ່ ໃນບັນຍາກາດທີ່ສອງພັກ ກຳລັງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ໄດ້ນຳພາຄະນະມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ ຫວຽດນາມ ແລະ ໄດ້ສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈ ມາຍັງ ສະຫາຍ ຫວໍວັນເຖື້ອງ, ປະທານປະເທດແຫ່ງ ສສ ຫວຽດນາມ ທີ່ໄດ້ໃຫ້ການຕ້ອນຮັບອັນອົບອຸ່ນແກ່ຄະນະ; ສະແດງຄວາມຊົມເຊີຍຕໍ່ສະຫາຍ ຫວໍວັນເຖື້ອງ ທີ່ໄດ້ຮັບການແຕ່ງຕັ້ງເປັນປະທານປະເທດແຫ່ງ ສສ ຫວຽດນາມ ແລະ ໄດ້ລາຍງານວ່າ ຝ່າຍລາວ ຕີລາຄາສູງຕໍ່ຜົນສຳເລັດໃນການຢ້ຽມຢາມລາວຂອງສະຫາຍ ໃນຕົ້ນເດືອນເມສາຜ່ານມາ ເຊິ່ງເປັນປະເທດທຳອິດ ພາຍຫຼັງຮັບຕຳແໜ່ງເປັນປະທານປະເທດ; ຂໍນຳເອົາຄຳຢື້ຢາມຖາມຂ່າວຈາກ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ມາຍັງ ສະຫາຍ ຫວໍວັນເຖື້ອງ, ປະທານປະເທດແຫ່ງ ສສ ຫວຽດນາມ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ລາຍງານໂດຍສັງເຂບກ່ຽວກັບຈຸດປະສົງການມາຢ້ຽມຢາມ ຫວຽດນາມ ໃນຄັ້ງນີ້, ເຊິ່ງເປັນການສືບຕໍ່ປະຕິບັດ ກົນໄກການຮ່ວມມື - ແລກປ່ຽນການຢ້ຽມຢາມ ລະຫວ່າງ ສອງຄະນະພົວພັນຕ່າງປະເທດສູນກາງ

ພັກ ລາວ-ຫວຽດນາມ ແລະ ທັງເປັນກິດຈະກຳ ສະເຫຼີມ ສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ຜ່ານມາ. ສະຫາຍ ໄດ້ຢືນຢັນວ່າ ພັກ, ລັດ ແລະ ປະຊາຊົນລາວ ພ້ອມກັບ ປະຊາຊົນຫວຽດນາມ ອ້າຍນ້ອງ ຈະສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.

**2. ກອງປະຊຸມສຳມະນາທິດສະດີ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຈີນ ຄັ້ງທີ 10**



ເພື່ອເປັນການຜັນຂະຫຍາຍແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊະຕາກຳ ລາວ-ຈີນ ແລະ ປະຕິບັດຕາມແຜນການຮ່ວມມື ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຈີນ, ໃນວັນທີ 04 ເມສາ 2023 ທີ່ໂຮງແຮມດອນຈັນພາເລດ, ສະພາທິດສະດີສູນກາງພັກ ປປ ລາວ, ຄະນະພົວພັນຕ່າງປະເທດສູນກາງພັກ ສົມທົບກັບພາກສ່ວນກ່ຽວຂ້ອງຂອງລາວ ໄດ້ຮ່ວມກັບ ຄະນະໂຄສະນາສູນກາງພັກກອມມູນິດຈີນ ແລະ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ຈັດກອງປະຊຸມສຳມະນາທິດສະດີ ລະຫວ່າງ ສອງພັກ ລາວ-ຈີນ ຄັ້ງທີ X ຜ່ານວິດີໂອທາງໄກ ພາຍໃຕ້ຫົວຂໍ້: **"ບົດຮຽນໃນການຄຸ້ມຄອງສັງຄົມແບບປະດິດສ້າງໃໝ່ ໃນຍຸກສະໄໝແຫ່ງຂໍ້ມູນຂ່າວສານ"** ໂດຍການເປັນປະທານຮ່ວມ ຂອງ ສະຫາຍ ນາງ ສີໃສ ລືເດດມູນສອນ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ປປ ລາວ ແລະ ສະຫາຍ ຫຼີ ຊູເລີ້ຍ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາສູນກາງພັກກອມມູນິດຈີນ; ເຂົ້າຮ່ວມກອງປະຊຸມຍັງມີ ສະຫາຍ ຄຳພັນ ເຜີຍຍະວົງ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ ປປ ລາວ ພ້ອມດ້ວຍບັນດາສະຫາຍພະນັກງານການນຳຂັ້ນສູງ, ບັນດານັກວິທະຍາສາດ, ນັກທິດສະດີ ຂອງ ສອງຝ່າຍເຂົ້າຮ່ວມ. ສອງຝ່າຍ ໄດ້ຜັດປ່ຽນກັນຂຶ້ນສະເໜີບົດຄຳເຫັນຫຼາຍຫົວຂໍ້. ຝ່າຍລາວ ໄດ້ນຳສະເໜີບັນດາບົດຮຽນ ກ່ຽວກັບ ພັກປະຊາຊົນ ປະຕິວັດລາວ ນຳພາ ການຄຸ້ມຄອງສັງຄົມແບບປະດິດສ້າງໃໝ່, ການປະຕິບັດບົດບາດຂອງລັດ ໃນການຄຸ້ມຄອງສັງຄົມ, ການຄຸ້ມຄອງສັງຄົມໃນເງື່ອນໄຂການປະຕິວັດອຸດສາຫະກຳ ຄັ້ງທີ 4, ການຫັນເປັນທັນສະໄໝໃນການຄຸ້ມຄອງຜົນລະເມືອງ ຢູ່ ສປປ ລາວ. ສຳລັບຝ່າຍຈີນ, ໄດ້ສະເໜີບົດ ກ່ຽວກັບ ແນວຄວາມຄິດພື້ນຖານ ແລະ ໜ້າທີ່ຕົ້ນຕໍ ໃນການປັບປຸງລະບົບການຄຸ້ມຄອງສັງຄົມໃນຍຸກສະໄໝແຫ່ງຂໍ້ມູນຂ່າວສານ, ການຍົກສູງລະດັບການຄຸ້ມຄອງດ້ວຍກົດໝາຍໃນການຄຸ້ມຄອງສັງຄົມ ແລະ ວຽກງານມະຫາຊົນໃນຍຸກສະໄໝໃໝ່. ບັນດານັກວິທະຍາສາດ ແລະ ແຂກເຂົ້າຮ່ວມກອງປະຊຸມ ໄດ້ແລກປ່ຽນບົດຮຽນຢ່າງກົງໄປກົງມາ ທັງໃນແງ່ທິດສະດີວິທະຍາສາດ ແລະ ພຶດຕິກຳຕົວຈິງຢ່າງເລິກເຊິ່ງ, ກວມລວມ, ທັງສະແດງໃຫ້ເຫັນເຖິງບັນຫາທີ່ເປັນ

ພື້ນຖານ ໃນການປະຕິບັດໜ້າທີ່ການເມືອງຂອງສອງພັກ ແລະ ສອງປະເທດ ລາວ-ຈີນ ໃນຍຸກສະໄໝແຫ່ງຂໍ້ມູນຂ່າວສານ. ການຈັດກອງປະຊຸມສຳມະນາທິດສະດີດັ່ງກ່າວ ເປັນການປະກອບສ່ວນຊຸກຍູ້ໃຫ້ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການສ້າງເປັນຄູ່ຮ່ວມຊະຕາກຳດຽວກັນ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ນັບແຕກດອກອອກຜົນຍິ່ງໆຂຶ້ນ.

**3. ຫົວໜ້າ ຄຕພ ຕ້ອນຮັບເອກອັກຄະລັດຖະທູດຫວຽດນາມ ປະຈຳລາວ ເຂົ້າອວຍພອນປີໃໝ່ລາວ**



ວັນທີ 06/04/2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ການຕ້ອນຮັບ ສະຫາຍ ຫງວຽນບ໋າຮຸ່ງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ເຂົ້າອວຍພອນປີໃໝ່ລາວ ພສ 2566. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຕາງໜ້າ ຄະນະພັກ, ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ສະແດງຄວາມຂອບອົກຂອບໃຈຕໍ່ ສະຫາຍ ຫງວຽນ ບ໋າ ຮຸ່ງ ພ້ອມຄະນະ ທີ່ໄດ້ມາອວຍພອນ ເນື່ອງໃນໂອກາດປີໃໝ່ລາວ ເຊິ່ງໄດ້ນຳເອົາມິດຈິດມິດໃຈ, ຄວາມສາມັກຄີຮັກແພງ ຖານມິດສະຫາຍອ້າຍນ້ອງທີ່ໃກ້ຊິດ ແລະ ຄຳອວຍພອນໄຊອັນເສີດ ມາຍັງ ຄະນະພັກ, ຄະນະນຳ ແລະ ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກ ທຸກຖ້ວນໜ້າ. ຕີລາຄາສູງຕໍ່ການປະກອບສ່ວນຂອງສະຖານທູດ ເຂົ້າໃນບັນດາຜົນສຳເລັດລວມຂອງ ສສ ຫວຽດນາມ ຕະຫຼອດໄລຍະທີ່ຜ່ານມາ ກໍຄື ການປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ສະຖານທູດກັບ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ພາກສ່ວນຕ່າງໆຂອງລາວ ໃນການເປັນເສນາທິການ, ເປັນຂົວຕໍ່ ແລະ ຕິດຕາມ, ກວດກາ, ແນະນຳຊຸກຍູ້ ບັນດາກະຊວງ, ອົງການ, ຂະແໜງການ, ທ້ອງຖິ່ນ ແລະ ວິສາຫະກິດຂອງສອງປະເທດ ຈັດຕັ້ງຜັນຂະຫຍາຍບັນດາ ຂໍ້ຕົກລົງຂັ້ນສູງຂອງ ສອງພັກ, ສອງລັດ ໃຫ້ບັນລຸຕາມແຜນການ ແລະ ເປົ້າໝາຍທີ່ວາງໄວ້, ປະກອບສ່ວນເຂົ້າໃນການ ເພີ່ມພູນຄູນສ້າງ ແລະ ເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ນັບກ້າວເຂົ້າສູ່ລວງເລິກ, ມີປະສິດທິຜົນຍິ່ງໆຂຶ້ນໄປ ແລະ ຮ່ວມກັນເສີມສ້າງ ສັນຕິພາບ, ມິດຕະພາບ, ການຮ່ວມມື ແລະ ພັດທະນາ ຢູ່ໃນພາກພື້ນ ແລະ ສາກົນ.

## 4. ປາຖະກະຖາ ວັນເກີດຂອງຜູ້ນຳ ສປປ ເກົາຫຼີ




ວັນທີ 03 ເມສາ 2023, ສະມາຄົມມິດຕະພາບລາວ - ສປປ ເກົາຫຼີ ຮ່ວມກັບມະຫາວິທະຍາໄລແຫ່ງ ຊາດ ແລະ ສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວໄດ້ຈັດພິທີປາຖະກະຖາ ເນື່ອງໃນໂອກາດວັນເກີດຂອງປະທານ ກິມ ອິນ ຊຸງ, ຜູ້ນຳທີ່ຍິ່ງໃຫຍ່ຂອງປະຊາຊົນ ສປປ ເກົາຫຼີ ຄົບຮອບ 111 ປີ (15/4/1912-15/4/2023) ທີ່ມະຫາວິທະຍາໄລ ແຫ່ງຊາດ ໃຫ້ກຽດເຂົ້າຮ່ວມພິທີ ມີ: ສະຫາຍ ອາດສະພັງທອງ ສີພັນດອນ, ກຳມະການສູນກາງພັກ, ເຈົ້າຄອງນະຄອນຫຼວງວຽງຈັນ, ປະທານ ສະມາຄົມມິດຕະພາບ ລາວ - ສປປ ເກົາຫຼີ; ສະຫາຍ ລີ ຢົງ ຊົນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ; ສະຫາຍ ສຈ ປອ ຮຸ່ງເພັດ ຈັນທະວົງ, ຄະນະພັກ, ຮອງປະທານກອດກາພັກກະຊວງສຶກສາທິການ ແລະ ກິລາ, ຄະນະປະຈຳພັກ, ຮອງເລຂາພັກ, ຮອງອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ; ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງ ປະເທດສູນກາງພັກ, ມີພະນັກງານຄູອາຈານ ແລະ ນັກສຶກສາຈາກມະຫາວິທະຍາໄລແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຈຳນວນ 350 ກວ່າຄົນ. ໃນໂອກາດດັ່ງກ່າວ, ສະຫາຍ ລີ ຢົງ ຊົນ ໄດ້ຂຶ້ນກ່າວປາຖະກະຖາເຖິງຜົນງານຊີວິດການເຄື່ອນໄຫວປະຕິວັດ ແລະ ການຊີ້ນຳໆພາຂອງ ສະຫາຍ ປະທານ ກິມ ອິນ ຊຸງ ໃນພາລະກິດປະຕິວັດຂອງພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນ ສປປ ເກົາຫຼີ ໃນຂະບວນວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດກໍຄືການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ ເຮັດໃຫ້ ສປປ ເກົາຫຼີ ມີການພັດທະນາຮອບດ້ານ, ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງ ປະຊາຊົນ ສປປ ເກົາຫຼີໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ. ສະຫາຍ ເອກອັກຄະລັດຖະທູດ ຍັງໄດ້ຍົກໃຫ້ເຫັນສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ ແລະ ການຮ່ວມມືລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ສປປ ເກົາຫຼີໃນໄລຍະຜ່ານມາ.

**5. ສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ພົບປະທາງໄກ ກັບ ສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ**




ວັນທີ 11 ເມສາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ພົບປະຜ່ານວີດີໂອທາງໄກ ກັບ ສະຫາຍ ອີລີມີໂອ ລັດມິຣ ໂລສາດາ ກາຣເຊຍ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ, ຊຶ່ງ ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມປິຕິຍິນດີທີ່ໄດ້ມີໂອກາດພົບປະຜ່ານວີດີໂອທາງໄກ ກັບ ສະຫາຍ ອີລີມີໂອ ລັດມິຣ ໂລສາດາ ກາຣເຊຍ ແລະ ສະແດງຄວາມຊົມເຊີຍສະຫາຍ ອີລີມີໂອ ລັດມິຣ ໂລສາດາ ກາຣເຊຍ ທີ່ໄດ້ຮັບການແຕ່ງຕັ້ງເປັນຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ ຄົນໃໝ່. ຝ່າຍລາວໄດ້ແຈ້ງສະພາບການທີ່ພົ້ນເດັ່ນຢູ່ ສປປ ລາວ ໃນໄລຍະຜ່ານມາ, ໂດຍສະເພາະການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ປປ ລາວ; ຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນກູບາອ້າຍນ້ອງ ພາຍໃຕ້ການນຳພາອັນເດັດດ່ຽວໜຽວແໜ້ນຂອງພັກກອມມູນິດກູບາ ຍາດມາໄດ້ຕະຫຼອດໄລຍະ 60 ກວ່າປີຜ່ານມາ, ໂດຍສະເພາະແມ່ນຜົນສຳເລັດທີ່ມີຄວາມໝາຍຄວາມສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ແລະ ປົກປັກຮັກສາໝາກຜົນຂອງການປະຕິວັດ ໃນທ່າມກາງການຖືກປິດລ້ອມ ທາງດ້ານເສດຖະກິດ, ການຄ້າ ແລະ ການເງິນ ເປັນເວລາຫົກທົດສະວັດ. ຕີລາຄາສູງຕໍ່ຄວາມສາມັກຄີ, ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກູບາ ກໍຄື ສອງຄະນະພົວພັນຕ່າງປະເທດສູນກາງພັກ, ຊຶ່ງໄດ້ຮັບການເສີມຂະຫຍາຍໃຫ້ນັບມື້ນັບ ແໜ້ນແຟ້ນຍິ່ງໆຂຶ້ນ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປະຕິວັດ ຢູ່ສອງປະເທດລາວ ແລະ ກູບາ ກໍຄືພາລະກິດ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ສາກົນ. ສະຫາຍ ອີລີມີໂອ ລັດມິຣ ໂລສາດາ ກາຣເຊຍ ໄດ້ແຈ້ງໃຫ້ຊາບສະພາບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກກອມມູນິດກູບາ; ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດຂອງ ສປປ ລາວ ທີ່ຍາດມາໄດ້ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສ ຂອງພັກ ປປ ລາວ, ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ; ບົດບາດ ແລະ ອິດທິພົນ ຂອງ ພັກ ແລະ ລັດຖະບານ ສປປ ລາວ ນັບມື້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ສະແດງຄວາມຂອບໃຈມາຍັງພັກ, ລັດຖະບານ ແລະ ປະຊາຊົນລາວອ້າຍນ້ອງ ທີ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນການປະຕິວັດກູບາ ຕະຫຼອດໄລຍະຜ່ານມາ.

### 6. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມລັດເຊຍ ຢ່າງເປັນທາງການ




ວັນທີ 27 ມີນາ- 03 ເມສາ 2023, ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຢ້ຽມຢາມ ແລະ ພົບປະເຮັດວຽກກັບສາມພັກການເມືອງ ໃນຣັດເຊຍ ຄື: ພັກກອມມູນິດສະຫະພັນຣັດເຊຍ, ພັກຣັດເຊຍເອກະພາບ ແລະ ພັກກອມມູນິດຊາວກອມມູນິດຣັດເຊຍ ເພື່ອສືບຕໍ່ຣັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບກັບສາມພັກການເມືອງດັ່ງກ່າວ ໃນກອບສອງຝ່າຍ ແລະ ຫຼາຍຝ່າຍ ໃຫ້ມີປະສິດທິຜົນຍິ່ງຂຶ້ນ. ຄະນະຜູ້ແທນພັກ ປປ ລາວ ຍັງໄດ້ເຂົ້າຮ່ວມກອງປະຊຸມຮອບປະຖົມມະລຶກຂອງຄະນະກຳມະການຈັດຕັ້ງກອງປະຊຸມສາກົນ, ຊຶ່ງໄດ້ຈັດຂຶ້ນໃນວັນທີ 30 ມີນາ 2023, ທີ່ນະຄອນຫຼວງມົດສະກູ, ສະຫະພັນຣັດເຊຍ, ໂດຍການເປັນເຈົ້າພາບຂອງ ພັກຣັດເຊຍເອກະພາບ, ມີຄະນະຜູ້ແທນຈາກ 15 ພັກການເມືອງທີ່ມາຈາກ ອາຊີ, ອາຟຣິກາ, ອາເມຣິກາລາຕິນ, ເອີຣົບ ແລະ 01 ອົງການຈັດຕັ້ງສາກົນ (ໄອແຄັບ ICAPP) ເຂົ້າຮ່ວມ. ໃນນີ້ ເຂົ້າຮ່ວມແບບເຊິ່ງໜ້າມີ 07 ພັກ ແລະ ແບບອອນລາຍມີ 08 ພັກການເມືອງ. ກອງປະຊຸມ ໄດ້ປຶກສາຫາລືຫຼາຍບັນຫາສຳຄັນ ເພື່ອກະກຽມໃຫ້ແກ່ການຈັດກອງປະຊຸມເວທີປຶກສາຫາລືຂອງບັນດາຝ່າຍສະໜັບສະໜູນການຕໍ່ສູ້ຕ້ານການປະຕິບັດຂອງລັດທິລ່າເມືອງຂຶ້ນແບບໃໝ່, ຊຶ່ງຈະຈັດຂຶ້ນໃນເດືອນ ຕຸລາ 2023, ໂດຍມີຈຸດປະສົງເພື່ອເຕົ້າໂຮມຄວາມເປັນເອກະພາບ ຂອງບັນດາກຳລັງການເມືອງ ແລະ ສັງຄົມທີ່ກ້າວໜ້າຂອງບັນດາປະເທດ ແລະ ທະວີບຕ່າງໆໃນໂລກ. ໃນກອງປະຊຸມ, ຫົວໜ້າຄະນະຜູ້ແທນ ພັກ ປປ ລາວ ໄດ້ປະກອບຄຳເຫັນ ໂດຍໄດ້ສະແດງຄວາມຍິນດີຕໍ່ແນວຄິດລິເລີ່ມຂອງ ພັກຣັດເຊຍເອກະພາບ ໃນການຈັດກອງປະຊຸມເວທີປຶກສາຫາລືດັ່ງກ່າວ; ຕາງໜ້າ ພັກ ປປ ລາວ ໄດ້ສົ່ງຄຳຢື້ຢາມຖາມຂ່າວ ຂອງ ພະນະທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ເຖິງພະນະທ່ານ ດີມິຕຣີ ອານາໂຕລີເຢວິດ ເມດເວເດບ, ປະທານພັກຣັດເຊຍເອກະພາບ, ຮອງປະທານສະພາຄວາມໝັ້ນຄົງແຫ່ງສະຫະພັນຣັດເຊຍ; ຢືນຢັນຄືນຄວາມໝາຍໝັ້ນຂອງພັກ ປປ ລາວ ໃນການເສີມສ້າງການຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດ ບົນພື້ນຖານ 05 ຫຼັກການແຫ່ງການຢູ່ຮ່ວມກັນໂດຍສັນຕິ ກໍຄື ບັນດາຫຼັກການ ແລະ ລະບຽບການ ຂອງກົດບັດ ສປຊ ແລະ ກົດໝາຍສາກົນ ເປັນຕົ້ນ ການເຄົາລົບເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງບັນດາປະເທດສະມາຊິກ, ບໍ່ແຊກແຊງເຂົ້າໃນກິດຈະການພາຍໃນຂອງກັນ ແລະ ກັນ; ຢືນຢັນຄວາມໝາຍໝັ້ນໃນການສືບຕໍ່ຮ່ວມມື ແລະ ເຮັດວຽກຢ່າງໃກ້ຊິດກັບ ພັກຣັດເຊຍເອກະພາບ ແລະ ບັນດາພັກເພື່ອນມິດ ແລະ ກຳລັງທີ່ກ້າວໜ້າຂອງບັນດາປະເທດຈາກອາຊີ, ອາຟຣິກາ, ອາເມຣິກາລາຕິນ ແລະ ເອີຣົບ ໃນການຕໍ່ສູ້ກັບການປະພຶດແບບລັດທິລ່າເມືອງຂຶ້ນແບບໃໝ່.

## 7. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງເອກອັກຄະລັດຖະທູດຟີລິບປິນ ຄົນໃໝ່ ປະຈໍາ ສປປ ລາວ



ວັນທີ 06 ເມສາ 2023, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ດີນາ ຈອຍ ດີ. ອາມາຕົງ (Deena Joy D. Amatong), ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສາທາລະນະລັດ ຟີລິບປິນ ປະຈໍາ ສປປ ລາວ. ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີ ແລະ ຊົມເຊີຍ ຕໍ່ທ່ານທູດ ທີ່ໄດ້ຮັບມອບໝາຍໜ້າທີ່ອັນສໍາຄັນໃນຄັ້ງນີ້ ແລະ ເຊື່ອໝັ້ນວ່າ ດ້ວຍປະສົບການອັນອຸດົມສົມບູນຂອງທ່ານທູດ, ຫວັງຢ່າງຍິ່ງວ່າ ທ່ານທູດຈະສືບຕໍ່ຍຸກຍູ້ ແລະ ປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຟີລິບປິນ ໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ; ພ້ອມທັງ ໄດ້ແຈ້ງໃຫ້ທ່ານທູດຄົນໃໝ່ ຊາບກ່ຽວກັບ ສະພາບການພົ້ນເດັ່ນໃນການປົກປັກຮັກສາ ແລະ ສ້າງສາພັດທະນາຂອງ ສປປ ລາວ, ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ການພົວພັນຮ່ວມມືລະຫວ່າງ ສອງ ລັດຖະບານ ລາວ-ຟີລິບປິນ ໃນໄລຍະທີ່ຜ່ານມາ, ແຈ້ງໃຫ້ຊາບພາລະບົດບາດຂອງຄະນະພົວພັນຕ່າງປະເທດສູນກາງພັກ ໃນການເປັນເສນາທິການດ້ານການຕ່າງປະເທດໃຫ້ແກ່ສູນກາງພັກ ປປ ລາວ, ການພົວພັນດ້ານການທູດປະຊາຊົນ ກໍຄື ການສ້າງຕັ້ງສາຍພົວພັນມິດຕະພາບ ລາວ-ຟີລິບປິນ ເຊິ່ງເປັນບາດກ້າວຂະຫຍາຍຕົວໃໝ່ປະກອບສ່ວນສໍາຄັນເຂົ້າໃນການພົວພັນຮ່ວມມື ລະຫວ່າງສອງປະເທດ. ສະແດງຄວາມຍິນດີ ທີ່ຈະໃຫ້ການສະໜັບສະໜູນທ່ານທູດ ໃນການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ, ປະກອບສ່ວນຊຸກຍູ້ສາຍພົວພັນມິດຕະພາບອັນດີງາມ ແລະ ການຮ່ວມມື ລະຫວ່າງ ລາວ-ຟີລິບປິນ ໃຫ້ນັບມື້ນັບມີການຂະຫຍາຍຕົວເປັນກ້າວໆ ຍິ່ງຂຶ້ນ ເພື່ອນໍາເອົາໝາກຜົນຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຟີລິບປິນ.